# ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ

| | |
|---|---|
| **ຕໍາແໜ່ງ** | ພະນັກງານໂພຊະນາການ ຂັ້ນບ້ານ |
| **ຈໍານວນຕໍາແໜ່ງ** | 34 |
| **ບ່ອນປະຈໍາການ** | ກຸ່ມບ້ານເປົ້າໝາຍ ພ້ອມທັງເດີນທາງຫາບ້ານເປົ້າໝາຍເປັນປົກກະຕິ |
| **ຜູ້ຊີ້ນໍາ** | ພະນັກງານໂພຊະນາການ ແລະ ພັດທະນາຊຸມຊົນ ຂັ້ນເມືອງ |
| **ທີ່ປຶກສາດ້ານວິຊາການ** | ທີມງານໂພຊະນາການ ແລະ ພັດທະນາຊຸມຊົນຂັ້ນສູນກາງ ແລະ ພະນັກງານໂພຊະນາການ ແລະ ພັດທະນາຊຸມຊົນ ຂັ້ນເມືອງ |
| **ຜູ້ປະສານງານໃກ້ຊິດ** | ທີມງານໂຄງການຂັ້ນເມືອງ ແລະ ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ |
| **ໄລຍະເວລາສັນຍາ** | ສັນຍາເປັນປີ, ຕໍ່ສັນຍາໄດ້ໃນຊ່ວງໄລຍະເວລາຂອງໂຄງການ, ຂຶ້ນກັບການທົບທວນຜົນງານປະຈໍາປີ, ຄວາມຕ້ອງການຂອງໂຄງການ, ແລະ ງົບປະມານ |

## ກ. ສະພາບລວມກ່ຽວກັບໂຄງການ

ການປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ຂອງ ສປປ ລາວ ແມ່ນປັດໃຈສໍາຄັນເພື່ອກ້າວໄປສູ່ ການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ ໃນເຂດເນີນສູງຂອງ ສປປ ລາວ. ໃນຂະນະທີ່ ປະມານ 2/3 ຂອງປະຊາກອນຂອງປະເທດ ອາໄສຢູ່ໃນເຂດຊົນນະບົດ, ພວກເຂົາເຈົ້າ ກວມເອົາ 88% ຂອງຜູ້ທຸກຍາກ. ເກືອບທັງໝົດຂອງຜູ້ທຸກຍາກ ແມ່ນຄົວເຮືອນກະສິກໍາ. ປະມານເຄິ່ງຫນຶ່ງຂອງຄົວເຮືອນກະສິກໍາທີ່ທຸກຍາກ (ຫຼື 41% ຂອງຈໍານວນຜູ້ທຸກຍາກ) ດໍາລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ, ສ່ວນຫຼາຍແມ່ນຢູ່ໃນເຂດເນີນສູງ; ມີພຽງແຕ່ 64% ຂອງກຸ່ມນີ້ ອາໄສຢູ່ໃນບ້ານທີ່ມີເສັ້ນທາງເຂົ້າເຖິງໄດ້ທຸກສະພາບອາກາດ. ດ້ວຍເຫດນີ້, ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ເປັນໂຄງການພັດທະນາ ທີ່ນໍາໃຊ້ຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າ, ມີຈຸດປະສົງເພື່ອປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ການບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສໍາລັບຊຸມຊົນທຸກຍາກໃນພື້ນທີ່ເປົ້າໝາຍໂຄງການ, ພ້ອມທັງຕອບສະໜອງທັນທີ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ. ໂຄງການດັ່ງກ່າວ ໄດ້ວາງເປົ້າໝາຍໃສ່ຊຸມຊົນທີ່ດ້ອຍໂອກາດໃນ ສປປ ລາວ ໃນ 7 ແຂວງ ຄື: ຫົວພັນ, ອຸດົມໄຊ, ຜົ້ງສາລີ, ຊຽງຂວາງ, ສາລະວັນ, ສະຫວັນນະເຂດ ແລະ ເຊກອງ. ນອກຈາກນັ້ນ, ໂຄງການ ປຊກ ແມ່ນສ່ວນໜຶ່ງຂອງວິທີການຫຼາຍຂະແໜງການຮ່ວມກັນຈັດຕັ້ງປະຕິບັດເພື່ອແກ້ໄຂບັນຫາດ້ານໂພຊະນາການ ແນໃສ່ຫຼຸດຜ່ອນບັນຫາເດັກຂາດໂພຊະນາການ ໃຫ້ເຫຼືອ ພຽງ 25% ໃນປີ 2025.

ໂຄງການປະກອບມີ 5 ອົງປະກອບ ຄື:

**ອົງປະກອບ 1: ການພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ (27.6 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນ ກິດຈະກໍາທີ່ຈັດຕັ້ງປະຕິບັດຢູ່ໃນລະດັບຊຸມຊົນທັງຫມົດຂອງບ້ານ. ບັນດາກິດຈະກໍາ ຈະເສີມສ້າງຄວາມສາມາດຂອງຊຸມຊົນ ເພື່ອຈັດລຽງບູລິມະສິດຄວາມຕ້ອງການລະດັບບ້ານ ທີ່ທົນທານຕໍ່ສະພາບອາກາດ ແລະ ການລົງທຶນໃສ່ພື້ນຖານໂຄງລ່າງຂະຫນາດນ້ອຍທີ່ກ່ຽວຂ້ອງ ແລະ ການດໍາເນີນງານ ແລະ ການບໍາລຸງຮັກສາ (O&M). ທັງໝົດນີ້ ຈະເນັ້ນໃສ່ສິ່ງເສີມການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນ ໂດຍສະເພາະຄວາມຕ້ອງການຂອງແມ່ຍິງ, ທຸກກຸ່ມຊົນເຜົ່າ ແລະ ກຸ່ມທີ່ມີຄວາມສ່ຽງ. ຈະໃຫ້ບຸລິມະສິດແກ່ບັນດາຄວາມຕ້ອງການທີ່ຈະແກ້ໄຂອຸປະສັກຕໍ່ກັບຄວາມໝັ້ນຄົງດ້ານສະບຽງອາຫານ, ການປັບປຸງໂພຊະນາການ, ແລະ/ຫຼື ການສ້າງລາຍຮັບ ໂດຍການມີສ່ວຮ່ວມຂອງກຸ່ມເຫຼົ່ານັ້ນ. ການອອກແບບ, ການດໍາເນີນງານ ແລະ ການບໍາລຸງຮັກສາ ພື້ນຖານໂຄງລ່າງຂະຫນາດນ້ອຍ ຈະລວມເອົາ

ລັກສະນະທີ່ມີການປ່ອຍທາດກາກບອນຕໍ່າ, ທົນທານຕໍ່ສະພາບອາກາດ ເຊັ່ນ: ການປະຕິບັດງານ, ຄວາມທົນທານ, ແລະ ຄວາມປອດໄພ.

**ອົງປະກອບ 2: ການສ້າງຄວາມອາດສາມາດໃນວຽກງານປັບປຸງຊີວິດການເປັນຢູ່ (7.95 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນກິດຈະກໍາລະດັບກຸ່ມທີ່ສົ່ງເສີມການສ້າງລາຍຮັບ. ກຸ່ມຈະໄດ້ປັບຕົວເຂົ້າກັບສະພາບເສດຖະກິດ-ສັງຄົມ ແລະ ສະພາບອາກາດຂອງບ້ານ. ຢູ່ໃນບ້ານປະເພດ II ແລະ ປະເພດ III, ໂຄງການ ປຊກ ຈະສະໜັບສະໜູນກຸ່ມທ້ອນເງິນ ແລະ ສິນເຊື່ອ, ສ່ວນຫຼາຍແມ່ນແມ່ຍິງ, ການສ້າງຄວາມຮູ້ດ້ານການເງິນ, ແລະ ກິດຈະກໍາການສ້າງລາຍຮັບທີ່ມີຄວາມຫຼາກຫຼາຍ ທົນທານຕໍ່ສະພາບອາກາດ. ໃນບາງບ້ານປະເພດ III ທີ່ມີທ່າແຮງດ້ານການຕະຫຼາດ, ໂຄງການ ຈະສະໜັບສະໜູນ ແລະ ການສ້າງຄວາມອາດສາມາດຂອງກຸ່ມຜະລິດ ທີ່ມີຢູ່ແລ້ວ ແລະ ຜູ້ສະໜອງປັດໃຈການຜະລິດກະສິກໍາທີ່ທົນທານຕໍ່ສະພາບອາກາດ. ໃນບ້ານປະເພດ I ທີ່ມີຄວາມສາມາດໃນການພັດທະນາວຽກງານທ້ອນເງິນ ແລະ ສິນເຊື່ອ ຈໍາກັດ ຍ້ອນສະມາຊິກໃນກຸ່ມສ່ວນໃຫຍ່ ທັງຍິງ ແລະ ຊາຍ ມີສະພາບຄວາມທຸກຍາກກວ່າ, ກຸ່ມເຫຼົ່ານີ້ ຈະເນັ້ນໃສ່ການຜະລິດສະບຽງອາຫານໃຫ້ພຽງພໍໃນການບໍລິໂພກ ແລະ ການສ້າງລາຍຮັບ.

**ອົງປະກອບ 3: ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ (4.75 ລ້ານໂດລາສະຫາລັດ).** ອົງປະກອບນີ້ ສະໜັບສະໜູນການປັບປຸງການບໍລິໂພກອາຫານ (ທັງດ້ານຄຸນນະພາບ ແລະ ປະລິມານ) ຂອງແມ່ ແລະ ເດັກ ອາຍຸ 1.000 ວັນທໍາອິດ ໂດຍການສົ່ງເສີມການປະຕິບັດດ້ານໂພຊະນາການທີ່ດີ. ອົງປະກອບນີ້ ແມ່ນອີງໃສ່ 5 ຫຼັກການ ຄື: (ກ) ການນໍາສະ ເໜີການບໍລິໂພກອາຫານທີ່ປຸງແຕ່ງພາຍໃນບ້ານທີ່ປະຫຍັດເວລາ, (ຂ) ການປະກອບສ່ວນຂອງຊຸມຊົນ, (ຄ) ການສ້າງແຮງຈູງໃຈອີງໃສ່ຜົນໄດ້ຮັບ ສໍາລັບຊາວບ້ານທີ່ຈັດຕັ້ງປະຕິບັດໄດ້ດີ, (ງ) ການເສີມສ້າງຄວາມເຂັ້ມແຂງຂອງໄວໜຸ່ມ ແລະ ສື່ສັງຄົມ ແລະ ການເພີ່ມແຫຼ່ງອາຫານໃນຂັ້ນທ້ອງຖິ່ນໃຫ້ຫຼາຍຂຶ້ນ. ຄວາມທົນທານຂອງຊຸມຊົນ ຈະຖືກເສີມສ້າງ ໂດຍການປະສົມປະສານລະຫວ່າງ ອາຫານຈາກການຜະລິດຂອງຄົວເຮືອນ, ການຊື້ອາຫານ ແລະ ການເກັບອາຫານຈາກປ່າ. ແຫຼ່ງສະບຽງອາຫານ ຈະໄດ້ຮັບການສົ່ງເສີມ, ເປັນຕົ້ນແມ່ນ ເຂດຜະລິດ ເຊັ່ນ: ສວນຄົວ, ຮົ້ວສວນ, ເຂດປູກເຂົ້າເນີນສູງ, ທົ່ງນາ, ປະເພດພືດແລະ ສູດອາຫານຕ່າງໆ, ຈະຖືກດັດປັບໃຫ້ແທດເໝາະກັບສະພາບນິເວດກະສິກໍາ ແລະ ວັດທະນະທໍາຂອງຊຸມຊົນ.

**ອົງປະກອບ 4: ວຽກງານຄຸ້ມຄອງບໍລິຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ປະເມີນຜົນ (4.7 ລ້ານໂດລາສະຫາລັດ).**

ອົງປະກອບນີ້ ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການດໍາເນີນງານ ສໍາລັບການຄຸ້ມຄອງໂຄງການໃນແຕ່ລະຈໍາວັນ ແລະ ລະບົບການຕິດຕາມ ແລະ ການປະເມີນຜົນ. ຊຶ່ງກວມເອົາການຈ້າງ, ການຝຶກອົບຮົມ, ແລະ ການໃຫ້ຄ່າຕອບແທນແກ່ພະນັກງານ ຢູ່ຂັ້ນສູນກາງ ແລະ ຂັ້ນເມືອງ ລວມທັງ ຄ່າໃຊ້ຈ່າຍຂອງຜູ້ອໍານວຍຄວາມສະດວກຂັ້ນບ້ານ; ອຸປະກອນທີ່ກ່ຽວຂ້ອງແລະ ຄ່າໃຊ້ຈ່າຍໃນການດໍາເນີນງານ; ແລະ ການບັນຊີ, ການຈັດຊື້ຈັດຈ້າງ, ການຄຸ້ມຄອງທາງດ້ານການເງິນ, ການຄວບຄຸມພາຍໃນ, ການກວດສອບ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຕິດຕາມ-ປະເມີນຜົນ, ແລະ ການສະໜັບສະໜູນດ້ານອື່ນໆ.

**ອົງປະກອບ 5: ນະໂຍບາຍການແກ້ໄຂໄພພິບັດສຸກເສີນ (0 ໂດລາສະຫາລັດ).** ໃນເບື້ອງຕົ້ນ ອົງປະກອບນີ້ ຈະບໍ່ມີການຈັດສັນງົບປະມານໄວ້ລ່ວງໜ້າ ແຕ່ຈະມີການຈັດສັນງົບປະມານມາຈາກອົງປະກອບອື່ນ ເພື່ອຕອບສະໜອງຢ່າງຮີບດ່ວນກັບວິກິດການ ຫຼື ເຫດການສຸກເສີນ ທີ່ລັດຖະບານ ປະກາດເປັນໄພພິບັດລະດັບຊາດ ທີ່ອາດຈະເກີດຂຶ້ນ ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ. ທັງສາມປະເພດບ້ານ ແມ່ນເງື່ອນໄຂເທົ່າທຽມກັນທີ່ຈະໄດ້ຮັບການສະໜັບສະໜູນ ໃນເວລາເກີດເຫດການໄພພິບັດ. ກິດຈະກໍາຂອງອົງປະກອບນີ້ ຈະອີງໃສ່ຍຸດທະສາດການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຂອງ ສປປ ລາວ.

## ຂ. ບົດບາດໂດຍລວມ

ພະນັກງານໂພຊະນາການຂັ້ນບ້ານ ມີໜ້າທີ່ຮັບຜິດຊອບ ໃຫ້ການສະໜັບສະໜູນ ຊຸມຊົນເປົ້າໝາຍ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳດັ່ງທີ່ໄດ້ກຳນົດໄວ້ໃນປື້ມຄູ່ມືການຈັດຕັ້ງປະຕິບັດ ໂຄງການ ປຊກ, ປື້ມຄູ່ມືໂພຊະນາການ ແລະ ການປ່ຽນແປງພຶດຕິກຳທາງສັງຄົມ, ລວມທັງການໃຫ້ຄຳແນະນຳດ້ານວິຊາການ ໃຫ້ແກ່ກຸ່ມໂພຊະນາການຊຸມຊົນ, ນຳໃຊ້ຮູບແບບການໃຫ້ຄວາມຮູ້ດ້ວຍວິທີເພື່ອນສອນເພື່ອນຜ່ານສື່ ເພື່ອກຳນົດ, ອອກແບບ ແລະ ປະຕິບັດກິດຈະກຳໂພຊະນາການ, ພ້ອມທັງ ປະສານງານຢ່າງໃກ້ຊິດກັບພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ສຳລັບບັນດາກິດຈະກຳທີ່ບໍ່ແມ່ນໂພຊະນາການ. ນອກຈາກນັ້ນ, ພະນັກງານໂພຊະນາການຂັ້ນບ້ານ ຍັງຈະຕິດຕາມກວດກາຄວາມຄືບໜ້າຂອງການປະຕິບັດກິດຈະກຳເຫຼົ່ານັ້ນ ເພື່ອໃຫ້ໄດ້ຕາມຈຸດປະສົງຂອງໂຄງການ ພາຍໃນບ້ານເປົ້າໝາຍ. ພະນັກງານໂພຊະນາການຂັ້ນບ້ານ ຍັງຕ້ອງໄດ້ປະສານງານກັບບັນດາໂຄງການ ທີ່ເຮັດວຽກດ້ານໂພຊະນາການ ຂອງແຜນງານໜຶ່ງດຽວທີ່ມີຫຼາຍຂະແໜງການເຂົ້າຮ່ວມຕາມຄວາມຈຳເປັນ.

## ຄ. ພາລະບົດບາດ ແລະ ຄວາມຮັບຜິດຊອບ

*<u>ວຽກໂພຊະນາການ</u>*

1. ສ້າງຕັ້ງກຸ່ມໂພຊະນາການຊຸມຊົນ ແລະ ຊ່ວຍອຳນວຍຄວາມສະດວກ ໃຫ້ກຸ່ມໂພຊະນາການຊຸມຊົນ ໃນການກະກຽມການສະເໜີຂໍທຶນຊ່ວຍເຫຼືອ ດ້ານອຸປະກອນ ແລະ ການຊ່ວຍເຫຼືອລ້າ ໂດຍໄດ້ຮັບການສະໜັບສະໜູນຈາກຜູ້ອຳນວຍຄວາມສະດວກຂັ້ນບ້ານ ໃນການສົ່ງຕໍ່ບັນດາຂໍ້ມູນຕ່າງໆດ້ານໂພຊະນາການ.
2. ສະໜັບສະໜູນກິດຈະກຳຂອງກຸ່ມໂພຊະນາການຊຸມຊົນ ໃນບ້ານເປົ້າໝາຍ ເພື່ອຈັດກອງປະຊຸມ, ຈັດກິດຈະກຳແປຮູບອາຫານ, ການແຕ່ງກິນ, ແບ່ງອາຫານຈຳນວນໜຶ່ງໃຫ້ກັບຄອບຄົວທຸກຍາກເອົາກັບບ້ານ, ກິດຈະກຳການລ້ຽງແບ້ເພື່ອຮີດເອົານ້ຳນົມ, ການເຮັດສວນຄົວ, ການສ້າງເຮືອນຮົ່ມ ຕາມທີ່ໄດ້ກຳນົດໄວ້ໃນປື້ມຄູ່ມືໂພຊະນາການ ແລະ ການປ່ຽນແປງພຶດຕິກຳທາງສັງຄົມ.
3. ລົງຢ້ຽມຢາມຄົວເຮືອນ ເພື່ອສົ່ງເສີມການປ່ຽນແປງພຶດຕິກຳທາງສັງຄົມດ້ານໂພຊະນາການ (ຮ່ວມກັບຜູ້ອຳນວຍຄວາມສະດວກຂັ້ນບ້ານ).
4. ຕິດຕາມຂະບວນການຈັດຊື້ອຸປະກອນເຄື່ອງໃຊ້ໄຟ້າ ເພື່ອສະໜອງໃຫ້ກຸ່ມໂພຊະນາການຊຸມຊົນ.

*<u>ສະໜັບສະໜູນ ຜູ້ອຳນວຍຄວາມສະດວກຂັ້ນບ້ານ</u>*

5. ສຳພາດຄັດເລືອກເອົາຜູ້ອຳນວຍຄວາມສະດວກຂັ້ນບ້ານ ໃນແຕ່ລະບ້ານ ແລະ ໃຫ້ການຝຶກອົບຮົມດ້ານການປະສານງານ ແລະ ຄວາມຕ້ອງການໃນການສະໜັບສະໜູນຕ່າງໆ (ໂດຍການຊ່ວຍເຫຼືອຈາກທີມງານໂຄງການ ປຊກ ຂັ້ນເມືອງ).
6. ພົບປະກັບຜູ້ອຳນວຍຄວາມສະດວກຂັ້ນບ້ານ ເປັນປະຈຳ ເພື່ອເກັບກຳບົດລາຍງານ, ປຶກສາຫາລືກ່ຽວກັບຄວາມຄືບໜ້າ ແລະ ບັນຫາຕ່າງໆ, ພ້ອມທັງຈັດຝຶກອົບຮົມວຽກງານໃຫ້ກັບທີ່.
7. ທົບທວນແຜນການສະໜອງອາຫານປະຈຳເດືອນ ແລະ ຮັບປະກັນວ່າຊຸມຊົນມີການປະກອບສ່ວນນັບແຕ່ມື້ເລີ່ມຕົ້ນກິດຈະກຳ.
8. ແນະນຳຊາວບ້ານກ່ຽວກັບກິດຈະກຳລ້ຽງແບ້ເພື່ອເອົານ້ຳນົມ ແລະ ປະສານງານກັບ ຟາມຄວາມນົມ ແຂວງຫຼວງພະບາງ ແລະ ເຄືອຂ່າຍຊາວກະສິກອນລາວ ແລະ ອົງການ Click ໃນການເຮັດສວນຄົວໂພຊະນາການ ແລະ ການສ້າງເຮືອນຮົ່ມ.
9. ສະໜັບສະໜູນການຝຶກອົບຮົມການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນຢູ່ບ້ານເປົ້າໝາຍ.

*ອຳນວຍຄວາມສະດວກໃຫ້ແກ່ການວາງແຜນພັດທະນາບ້ານ (VDP)*

10. ຊ່ວຍໃນການຈັດຕັ້ງປະຕິບັດກອງປະຊຸມແນະນຳຂັ້ນບ້ານ ໂດຍການເຮັດວຽກໃກ້ຊິດກັບທີມງານໂຄງການ ປຊກ ຂັ້ນເມືອງ ເພື່ອໃຫ້ແນ່ໃຈວ່າ ສະມາຊິກໃນຊຸມຊົນ ເຂົ້າໃຈຈຸດປະສົງຂອງໂຄງການ, ບັນດາກິດຈະກຳທີ່ຈະປະຕິບັດພາຍໃນບ້ານ ແລະ ບົດບາດຂອງຊຸມຊົນ.
11. ອຳນວຍຄວາມສະດວກ ແລະ ຈັດຕັ້ງການເກັບກຳບັນດາຂໍ້ມູນພື້ນຖານຂັ້ນບ້ານ ຮ່ວມກັບທີມງານໂຄງການ ປຊກ ຂັ້ນເມືອງ.
12. ນຳພາຊຸມຊົນ ວາງແຜນພັດທະນາບ້ານ (ໂດຍການສະຫນັບສະໜູນດ້ານວິຊາການຈາກຄູ່ຮ່ວມງານ) ດ້ວຍການແນະນຳ ແລະ ການທົບທວນຄືນບັນດາຂໍ້ມູນ ເຊັ່ນ: ອະທິບາຍຂະບວນການສ້າງແຜນພັດທະນາບ້ານ, ບັນດາລາຍການພື້ນຖານໂຄງລ່າງ, ລາຍການທີ່ທາງໂຄງການ ປຊກ ບໍ່ໃຫ້ການສະໜັບສະໜູນ.
13. ນຳພາຂະບວນການວາງແຜນພັດທະນາບ້ານ ແລະ ຈັດບຸລິມະສິດໃນການສົນທະນາກຸ່ມນ້ອຍ ເພື່ອພັດທະນາເປັນແຜນຂອງບ້ານ ແລະ ສັງລວມເຂົ້າເປັນແຜນພັດທະນາບ້ານ.

*ຮູບແບບການໃຫ້ຄວາມຮູ້ດ້ວຍວິທີເພື່ອນສອນເພື່ອນຜ່ານສື່*

14. ແນະນຳຊາວບ້ານກ່ຽວກັບການຜະລິດວິດີໂອຊຸມຊົນ ແລະ ປະສານງານໃນການຝຶກອົບຮົມໂດຍຄູ່ຮ່ວມງານອື່ນໆ (ເຊັ່ນ ອົງການ Click), ກ່ຽວກັບເລື່ອງຄວາມສຳເລັດຕ່າງໆ, ຫົວຂໍ້ຂອງວິດີໂອທີ່ຈະນຳສະເຫນີ ແລະ ອື່ນໆ.
15. ສະໜັບສະໜູນຊຸມຊົນໃນການກະກຽມບັນດາຫົວຂໍ້ທີ່ຈະສ້າງເປັນວິດີໂອ ແລະ ສະໜັບສະໜູນການຮຽນຮູ້ທີ່ຈະເອົາລົງໃນສື່ສັງຄົມອອນໄລ, ລວມມີການສະຫນອງການຝຶກອົບຮົມການຕິດຕາມໃຫ້ແກ່ສະມາຊິກກຸ່ມໂພຊະນາການຊຸມຊົນ ໃນການຜະລິດວິດີໂອ ແລະ ຮັບປະກັນຄຸນນະພາບຂອງແຕ່ລະວິດີໂອທີ່ຜະລິດຈາກສະມາຊິກກຸ່ມໂພຊະນາການຊຸມຊົນ ແລະ ໂພສລົງອອນໄລ ໂດຍນຳໃຊ້ແທັບເລັດ.

*ການຕິດຕາມ ແລະ ການປະເມີນຜົນ*

16. ກະກຽມບົດລາຍງານຄວາມຄືບໜ້າວຽກງານໂພຊະນາການ ແລ້ວລາຍງານໃຫ້ ພະນັກງານໂພຊະນາການ ແລະ ພັດທະນາຊຸມຊົນ ຂັ້ນເມືອງ ເປັນປົກກະຕິ.
17. ປ້ອນຂໍ້ມູນຈາກປຶ້ມບັນທຶກຂອງກຸ່ມໂພຊະນາການຊຸມຊົນ ແລະ ບັນທຶກໃນໂປແກມ Kobo Toolbox ໃນເວລາທີ່ໄປຢ້ຽມຢາມບ້ານເປົ້າໝາຍ.
18. ກວດກາຄຸນນະພາບການປ້ອນຂໍ້ມູນໃນປຶ້ມບັນທຶກທຸກຄັ້ງ ແລະ ບັນທຶກ ແລະ ໃຫ້ຄຳຄິດເຫັນ.
19. ຝຶກອົບຮົມ (ລວມທັງ ການຝຶກອົບຮົບຄືນ) ໃຫ້ກຸ່ມໂພຊະນາການຊຸມຊົນ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານກ່ຽວກັບການລາຍງານທີ່ບັນທຶກໃນປຶ້ມ ແລະ ວິທີການບັນທຶກຕ່າງໆ.
20. ໃຫ້ຄຳຄິດເຫັນກ່ຽວກັບການນຳໃຊ້ໂປແກມ Kobo Toolbox.
21. ເຂົ້າຮ່ວມບັນດາກິດຈະກຳ ການເກັບກຳຂໍ້ມູນ ຕາມຄວາມຕ້ອງການຂອງທີມງານບໍລິຫານງານຂັ້ນເມືອງ.

*ການປະສານງານຂອງການໃຫ້ບໍລິການ / ການຝຶກອົບຮົມ*

22. ສ້າງປະຕິທິນກິດຈະກຳຂັ້ນບ້ານ ແລະ ໃຫ້ສອດຄ່ອງກັບກິດຈະກຳການປັບປຸງຊີວິດການເປັນຢູ່ (ກຳນົດວ່າກອງປະຊຸມໃດສາມາດຮ່ວມກັນໄດ້, ເຊັ່ນ: ກອງປະຊຸມແນະນຳໂຄງການ ແລະ ອື່ນໆ).
23. ປະສານງານ ແລະ ຊີ້ນຳການຝຶກອົບຮົມໃຫ້ແກ່ຊາວກະສິກອນຕົວແບບ ລວມທັງແນວພັນ, ການເກັບຮັກສາແນວພັນພືດ, ການຜະລິດວິດີໂອ ທີ່ສະໜອງໃຫ້ໂດຍເຄືອຂ່າຍຊາວກະສິກອນລາວ/ອົງການ Click.

24. ປະສານງານກັບບັນດາໂຄງການ ຂອງແຜນງານໜຶ່ງດຽວທີ່ມີຫຼາຍຂະແໜງການເຂົ້າຮ່ວມ ທີ່ໄດ້ຮັບທຶນຈາກທະນາຄານໂລກ ທີ່ຈັດຕັ້ງປະຕິບັດໃນເຂດເປົ້າໝາຍດຽວກັນ ເຊັ່ນ: ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນຊົນນະບົດ (RRPM), ໂຄງການເຂົ້າເຖິງການບໍລິການດ້ານສຸກຂະພາບ ແລະ ໂພຊະນາການ (HANSA) ແລະ ໂຄງການອື່ນໆ ເຊັ່ນ: ໂຄງການກະສິກຳເພື່ອໂພຊະນາການ ໄລຍະທີ 2 (AFN 2).

*ການຈັດຕັ້ງປະຕິບັດກອບວຽກງານສິ່ງແວດລ້ອມ ແລະ ສັງຄົມ ສຳລັບກິດຈະກຳທີ່ກ່ຽວຂ້ອງກັບໂພຊະນາການ*

25. ປະສານສົມທົບກັບທີມງານສິ່ງແວດລ້ອມ ແລະ ສັງຄົມ ຂັ້ນເມືອງ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ໃນບ້ານເປົ້າໝາຍ.
26. ຊ່ວຍຕິດຕາມວຽກງານການຄຸ້ມຄອງຄວາມສ່ຽງທີ່ກ່ຽວຂ້ອງກັບຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ, ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ໄປຕາມແນວທາງ ແລະ ມາດຕະຖານຂອງໂຄງການ.
27. ລາຍງານຄວາມສ່ຽງ, ບັນຫາ ແລະ ຂໍ້ຂ້ອງໃຈທີ່ອາດຈະເກີດຂຶ້ນໂດຍສະມາຊິກກຸ່ມໂພຊະນາການຊຸມຊົນ ແລະ ຜູ້ໄດ້ຮັບຜົນກະທົບຈາກບັນດາກິດຈະກຳຂອງໂຄງການ ໃຫ້ກັບຫົວໜ້າທີມຂັ້ນເມືອງ ແລະ ພະນັກງານສິ່ງແວດລ້ອມ ແລະ ສັງຄົມ ຂັ້ນເມືອງ ເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດໂຄງການ.
28. ຕິດຕາມ ແລະ ລາຍງານຕົວຊີ້ວັດ ບົດບາດຍິງ-ຊາຍ ແລະ ການເຂົ້າຮ່ວມຂອງສັງຄົມ ຢ່າງເປັນປົກກະຕິ, ຮັບປະກັນວ່າກິດຈະກຳຂອງໂຄງການ ແມ່ນໄດ້ລວມເອົາຕົວຊີ້ວັດດ້ານບົດບາດຍິງ-ຊາຍ ແລະ ຄວາມສະເໝີພາບເຂົ້າໃນການລາຍງານ.

*ການເຂົ້າຮ່ວມການຝຶກອົບຮົມ*

29. ເຂົ້າຮ່ວມການຝຶກອົບຮົມຕ່າງໆ: ເຂົ້າຮ່ວມຢ່າງຫ້າວຫັນໃນທຸກຊຸດຝຶກອົບຮົມ ເພື່ອພັດທະນາທັກສະ ແລະ ຄວາມຮູ້ທີ່ກ່ຽວຂ້ອງ ເພື່ອປະສິດທິພາບໃນການປະຕິບັດໜ້າທີ່ຂອງຕົນ.

*ວຽກງານທີ່ກ່ຽວຂ້ອງອື່ນໆ*

30. ປະຕິບັດວຽກງານອື່ນໆ ຕາມການຮຽກຮ້ອງຂອງຜູ້ຊີ້ນຳ, ທີ່ປຶກສາດ້ານວິຊາການ ແລະ ຕາມຄວາມຮຽກຮ້ອງຕ້ອງການຂອງໂຄງການ.

## ງ. ເງື່ອນໄຂຂອງຜູ້ສະໝັກ

- ຈົບຊັ້ນສູງ ສາຂາວິທະຍາສາດສຸຂະພາບ/ການແພດ, ໂພຊະນາການ, ກະສິກຳ, ການພັດທະນາຊຸມຊົນ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ.
- ມີປະສົບການດ້ານການສົ່ງເສີມວຽກໂພຊະນາການໃນເຂດຊົນນະບົດ ໂດຍເນັ້ນໃສ່ການປ່ຽນແປງພຶດຕິກຳທາງສັງຄົມ ແລະ ກິດຈະກຳການຜະລິດກະສິກຳ ຕິດພັນກັບໂພຊະນາການ ແລະ ການວາງແຜນແບບມີສ່ວນຮ່ວມໃນຊຸມຊົນ.
- ມີທັກສະການສື່ສານທາງສັງຄົມທີ່ດີ ແລະ ມີປະສົບການເຮັດວຽກກັບອຳນາດການປົກຄອງທ້ອງຖິ່ນ, ກຸ່ມແມ່ຍິງ ແລະ ຊົນເຜົ່າ.
- ມີທັກສະໃນການນຳໃຊ້ຄອມພິວເຕີຂັ້ນພື້ນຖານ ສາມາດນຳໃຊ້ໂປຣແກຣມ MS Office (Word, Excel);
- ສາມາດສື່ສານເປັນພາສາທ້ອງຖິ່ນໄດ້ ຈະພິຈາລະນາເປັນພິເສດ.
- ສາມາດເດີນທາງ ແລະ ພັກເຊົາຢູ່ບ້ານເປົ້າໝາຍໂຄງການໄດ້.